<u>ເອກະສານຄັດຕິດ 1</u>

<u>ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາວາລະຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017</u>

<u>ລາຍລະອຽດ</u>: ເພື່ອເຮັດໃຫ້ບັນດາວາລະທີ່ຈະນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ດຳເນີນໄປດ້ວຍ ຄວາມເປັນເອກະພາບກັນກັບບັນດາຜູ້ຖືຮຸ້ນທຸກທ່ານ.

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງເອົາວາລະຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມ ດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016</u>

<u>ລາຍລະອຽດ</u>: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ໄດ້ຈັດຂຶ້ນໃນວັນທີ 27 ເມສາ 2017 ໂດຍກອງປະຊຸມໄດ້ ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີ ລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ **(ເອກະສານຄັດຕິດ 2).**

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2016 ມີຄວາມຖືກຕ້ອງຄົບຖ້ວນ ຈຶ່ງຂໍສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງບົດບັນທຶກ ກອງປະຊຸມນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມ ດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງ ຜົນການປະຕິບັດງານ ປີ 2017 ແລະ ແຜນການດຳເນີນທຸລະ ກິດຂອງ ບໍລິສັດ ປະຈຳປີ 2018</u>

ລາຍລະອຽດ

I. **ຜົນການດຳເນີນທຸລະກິດ 2017**

1. **ການຂາຍ**

2. ຍອດຂາຍລວມຂອງ 2017 ປະຕິບັດໄດ້: 96% ຂອງແຜນປີ

ແຜນການຂາຍ (ລ້ານລິດ)	ຜົນການປະຕິບັດ (ລ້ານ ລິດ)	ສ່ວນຕ່າງ (ລ້ານລິດ)	ຄິດເປັນ %
149,22	**143**	**-6,22**	**96%**

3. ການຂະຫຍາຍໂຕຂອງປິໂຕຣເທຣດ

ຍອດການສົ່ງອອກ: 5 ລ້ານລິດ (ແຜນເບື້ອງຕົ້ນ 277)

ປີ	ປ້ຳ (ລ້ານ ລິດ)	% ຂະຫຍາຍ ຕົວ	ໂຄງການ (ລ້ານລິດ)	% ຂະຫຍາຍ ຕົວ	Re-Export (ລ້ານລິດ)	% ຂະຫຍາຍ ຕົວ	ຍອດ ຂາຍລວມ	% ຂະຫຍາຍ ຕົວ
2016	69	7	92	41	49	277	**210**	**50**
2017	77	12	61	-34	5	-90	**143**	**-32**

4. ການຂະຫຍາຍຕົວຂອງປ້ຳ

ການຂະຫຍາຍປ້ຳໃໝ່ໃນປີ 2017 ສາມາດປະຕິບັດໄດ້ 7 ປ້ຳ ເທົ່າກັບ 28% ຂອງແຜນການ ສາເຫດທີ່ເຮັດໃຫ້ຍອດການຂະຫຍາຍປ້ຳບໍ່ເປັນໄປຕາມແຜນຄື 25 ປ້ຳ, ແມ່ນຍ້ອນພາກລັດໄດ້ໂຈະການສ້າງ ປ້ຳນ້ຳມັນທົ່ວປະເທດ ຈຶ່ງເຮັດໃຫ້ບໍລິສັດມີປ້ຳນ້ຳມັນທັງໝົດ 131 ປ້ຳ ກວມ 14 ແຂວງທົ່ວປະເທດ.

ລ/ດ	ປະເພດປ້ຳ	ປ້ຳເປີດໃໝ່ 2017	ແຜນການເປີດປ້ຳ 2017	ປ້ຳທັງໝົດ
1	ພລາຕິນຳ PLT		2	5
2	ໂກລ GLD	2	4	10
3	ມາດຕະຖານ STD	5	9	44
4	ທ້ອງຖິ່ນພັດທະນາ THN		10	72
	ລວມ	**7**	**25**	**131**

5. ການຂະຫຍາຍຕົວຂອງລູກຄ້າໂຄງການ


ການຂະຫຍາຍລູກຄ້າໂຄງການ ໃນປີ 2017 ສາມາດປະຕິບັດໄດ້ 4 ໂຄງການ ເທົ່າກັບ 33% ຂອງແຜນການ (12 ໂຄງການ) ເຮັດໃຫ້ບໍລິສັດມີລູກຄ້າໂຄງການທັງໝົດ 135 ໂຄງການ.

ລ/ດ	ປະເພດຄູ່ຄ້າ	2017	ແຜນການ 2017	ໂຄງການທັງໝົດ
1	**ໂຄງການ-ກໍ່ສ້າງ PRO+CON**	1	10	**94**
2	**ອຸດສາຫະກຳ-ການຄ້າ IND+TRA**	3	2	**41**
ລວມ		**4**	**12**	**135**

ໝາຍເຫດ: ໂຄງການທີ່ຍັງມີສັນຍາໃນປີ 2017 ມີ 62 ໂຄງການ

6. ອັດຕາສ່ວນຄອງຕະຫຼາດ

ໃນປີ 2017 ບໍລິສັດນ້ຳມັນໃນລາວມີທັງໝົດ 26 ບໍລິສັດ ໃນນີ້ ບໍລິສັດ ມີອັດຕາສ່ວນຄອງຕະຫຼາດຢູ່ທີ 10% ແລະ ຢືນຢູ່ອັນດັບ 4 ຂອງບໍລິສັດສະໜອງນ້ຳມັນເຊື້ອໄຟໃນ ສປປ ລາວ.



II. ແຜນການດຳເນີນທຸລະກິດປີ 2018

1. ແຜນການຂະຫຍາຍປ້ຳປະຈຳປີ 2018

ລ/ດ	ປະເພດປ້ຳ	ແຜນການຂະຫຍາຍ
1	ພລາຕິນຳ PLT	1
2	ໂກລ GLD	3
3	ມາດຕະຖານ STD	10
4	ທ້ອງຖິ່ນພັດທະນາ THN	3
ລວມ		**17**

2. ແຜນການຂະຫຍາຍຄູ່ຄ້າໂຄງການປະຈຳປີ 2018

ລ/ດ	ຄູ່ຄ້າ	ແຜນການຂະຫຍາຍ
1	ໂຄງການ-ກໍ່ສ້າງ PRO+CON	**12**
2	ອຸດສາຫະກຳ-ການຄ້າ IND+TRA	**5**
ລວມ		**17**

3. ແຜນການຂາຍປະຈຳປີ 2018

ລ/ດ	ເປົ້າໝາຍການຂາຍ	ແຜນການຂາຍ (ລ້ານລິດ)
1	ຂາຍຜ່ານປ້ຳ	**104**
2	ຂາຍຜ່ານໂຄງການ	**143**
ລວມ:		**247**

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງຜົນການປະຕິບັດງານ ປີ 2017 ແລະ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2018.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນ ປະຈຳປີ 2017</u>

ລາຍລະອຽດ: ຮ່າງເອກະສານລາຍງານການເງິນຈາກຜູ້ກວດສອບພາຍນອກ ລາຍລະອຽດຕາມ **(ເອກະສານຄັດຕິດ 3)** ແລະ ສາມາດສະຫຼຸບເນື້ອໃນສຳຄັນໄດ້ດັ່ງນີ້:

(ເອກະສານລາຍງານການເງິນສະບັບທີ່ຜ່ານການກວດສອບ ແລະ ໄດ້ຮັບອະນຸມັດຢ່າງເປັນທາງການ ບໍລິສັດຈະເປີດເຜີຍ ກ່ອນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ).

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳປີ 2017.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2017 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ</u>

ລາຍລະອຽດ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 ການ ແບ່ງເງິນປັນຜົນ: "ຫ້າມບໍ່ໃຫ້ບໍລິສັດ ຈ່າຍເງິນປັນຜົນເມື່ອບໍລິສັດຍັງມີເງິນຂາດທຶນ ຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ".

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2017.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 06: ພິຈາລະນາ ແລະ ຮັບຮອງ ສືບຕໍ່ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2018</u>

ລາຍລະອຽດ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ, ບໍລິສັດໄດ້ເລືອກ ແລະ ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດ (Price Water House Coopers (Lao) Co., Ltd) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ

2018 ເນື່ອງຈາກເປັນບໍລິສັດທີ່ມີປະສົບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່ ແລະ ເປັນ ບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີຄ່າຈ້າງເປັນເງິນຈຳ ນວນປະມານ 55.000 ໂດລາສະຫະລັດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງແຕ່ງຕັ້ງ ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (“PwC”) ເປັນ ຜູ້ກວດສອບບັນຊີພາຍນອກ ໃນວົງເງິນບໍ່ເກີນ USD55.000.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ການລາອອກຈາກຕຳແໜ່ງຂອງ ປະທານສະພາບໍລິຫານ, ຜູ້ອຳນວຍການໃຫຍ່

ລາຍລະອຽດ: ທັງສາມທ່ານໄດ້ໄປຮັບຜິດຊອບໜ້າທີ່ອື່ນ ຈຶ່ງລາອອກຈາກຕຳແໜ່ງດັ່ງນີ້:

1. ທ່ານ ຫວ່າງ ຣັຕນະວົງ ປະທານສະພາບໍລິຫານ / ປະທານກຳມະການກວດກາພາຍໃນ / ກຳມະການອິດສະລະ;
2. ທ່ານ ຈັນທອນ ສິດທິໄຊ ຮອງປະທານສະພາບໍລິຫານ / ຜູ້ອຳນວຍການໃຫຍ່;
3. ທ່ານ ວຽງຄອນ ສິດທິໄຊ ຜູ້ອຳນວຍການບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງການລາອອກດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນ ສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08: ພິຈາລະນາ ແລະ ຮັບຮອງ ການປັບປ່ຽນຕຳແໜ່ງ ແລະ ຈຳນວນສະມາຊິກສະພາ ບໍລິຫານ

ລາຍລະອຽດ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ອຳນວຍການ ຫຼື ສະພາ ບໍລິຫານ ແລະ ເພື່ອໃຫ້ສອດຄ່ອງກັບ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ສະບັບເລກທີ 0024/ ຄຄຊ, ລົງວັນທີ 26 ຕຸລາ 2016. ການປັບປ່ຽນຕຳແໜ່ງ ແລະ ຈຳນວນສະມາຊິກສະພາບໍລິຫານ ພາຍໃນສະພາບໍລິຫານ ບໍລິສັດ ກໍເປັນຜົນອັນເນື່ອງມາຈາກສະມາຊິກສະພາບໍລິຫານບາງທ່ານໄດ້ລາອອກໄປເຮັດໜ້າທີ່ອື່ນ ແລະ ມີລາຍລະອຽດ ລຸ່ມນີ້:

ສະພາບໍລິຫານຊຸດເກົ່າ:

1. ທ່ານ ຫວ່າງ ຣັຕນະວົງ : ປະທານສະພາບໍລິຫານ / ປະທານກຳມະການກວດກາພາຍໃນ / ກຳມະການອິດສະລະ;
2. ທ່ານ ນາງ ສະຫວັນທອງ ພົງສະຫວັນ : ຮອງປະທານສະພາບໍລິຫານ;
3. ທ່ານ ຈັນທອນ ສິດທິໄຊ : ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່;
4. ທ່ານ ນາງ ດາລີ ພົນເສນາ : ສະມາຊິກສະພາບໍລິຫານ/ ຮອງປະທານກຳມະການກວດກາພາຍໃນ / ກຳມະການອິດສະລະ;
5. ທ່ານ ໜູພັນ ມະຫາວົງ : ສະມາຊິກສະພາບໍລິຫານ/ ກ□ຳມະການກວດກາພາຍໃນ / ກຳມະການອິດສະລະ;
6. ທ່ານ ໂພໄຊ ຈັນທະວົງສາ : ສະມາຊິກສະພາບໍລິຫານ;
7. ທ່ານ ນາງ ຈັນທະດອມ ເມກສະຫວັນ : ສະມາຊິກສະພາບໍລິຫານ;
8. ທ່ານ ບຸນຖັນ ຈິດຕະວົງ : ສະມາຊິກສະພາບໍລິຫານ;
9. ທ່ານ ວຽງຄອນ ສິດທິໄຊ : ສະມາຊິກສະພາບໍລິຫານ.

ສະພາບໍລິຫານຊຸດໃໝ່:

1. ທ່ານ ຈັນທອນ ສິດທິໄຊ : ປະທານສະພາບໍລິຫານ;
2. ທ່ານ ນາງ ສະຫວັນທອງ ພົງສະຫວັນ : ຮອງປະທານສະພາບໍລິຫານ;
3. ທ່ານ ນາງ ດາລີ ພົນເສນາ : ສະມາຊິກສະພາບໍລິຫານອິດສະລະ; ປະທານຄະນະກຳມະການ ກວດສອບຄວາມສ່ຽງພາຍໃນ;
4. ທ່ານ ໜູພັນ ມະຫາວົງ : ສະມາຊິກສະພາບໍລິຫານອິດສະລະ; ຄະນະກຳມະການ ກວດສອບຄວາມສ່ຽງພາຍໃນ;
5. ທ່ານ ໂພໄຊ ຈັນທະວົງສາ : ສະມາຊິກສະພາບໍລິຫານອິດສະລະ; ຄະນະກຳມະການ ກວດສອບຄວາມສ່ຽງພາຍໃນ;
6. ທ່ານ ນາງ ຈັນທະດອມ ເມກສະຫວັນ : ສະມາຊິກສະພາບໍລິຫານ;
7. ທ່ານ ບຸນຖັນ ຈິດຕະວົງ : ສະມາຊິກສະພາບໍລິຫານ.

(ຊີວະປະຫວັດຫຍໍ້ຂອງສະພາບໍລິຫານ ຕາມ **ເອກະສານຄັດຕິດ 4**)

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະ ນາຮັບຮອງການປັບປ່ຽນຕຳແໜ່ງ ແລະ ຈຳນວນສະມາຊິກສະພາບໍລິຫານ.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 09: ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານໃນການຊອກຫາ ແລະ ຄັດເລືອກເອົາບຸກຄົນທີ່ມີຄວາມຮູ້ຄວາມສາມາດບໍ່ວ່າຈະມາຈາກພາຍໃນ ຫຼື ຕ່າງປະເທດ ມາຮັບຕຳແໜ່ງ ຜູ້ອຳນວຍການໃຫຍ່ ຂອງບໍລິສັດທີ່ຫວ່າງລົງ.</u>

ລາຍລະອຽດ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ອຳນວຍການ ຫຼື ສະພາບໍລິຫານ. ເນື່ອງຈາກຜູ້ອຳນວຍການໃຫຍ່ໄດ້ລາອອກ ແລະ ປັດຈຸບັນຍັງບໍ່ສາມາດຫາຜູ້ອຳນວຍການໃຫຍ່ຄົນໃໝ່ມາແທນໄດ້, ດັ່ງນັ້ນບໍລິສັດຕ້ອງໃຊ້ເວລາໃນການຊອກຫາ ແລະ ຄັດເລືອກເອົາບຸກຄົນທີ່ມີຄວາມຮູ້ຄວາມສາມາດບໍ່ວ່າຈະມາຈາກພາຍໃນ ຫຼື ຕ່າງປະເທດ ມາຮັບຕຳແໜ່ງ ຜູ້ອຳນວຍການໃຫຍ່ ຂອງບໍລິສັດທີ່ຫວ່າງລົງເພື່ອໃຫ້ມາປະຕິບັດໜ້າທີ່ຕາມພາລະບົດບາດຂອງຜູ້ອຳນວຍການໃຫຍ່. ດັ່ງທີ່ໄດ້ກຳນົດໄວ້ໃນລະບຽບການຂອງບໍລິສັດ ແລະ ຕາມທິດຊີ້ນຳຂອງສະພາບໍລິຫານ ເຊິ່ງຄາດວ່າຈະຫາບຸກຄົນທີ່ເໝາະສົມມາຮັບຕຳແໜ່ງ ຜູ້ອຳນວຍການໃຫຍ່ ບໍ່ເກີນພາຍໃນໄຕມາດ 3/2018. ໃນໄລຍະຈັດຫາຜູ້ອຳນວຍການໃຫຍ່ ຄົນໃໝ່ ແມ່ນສະເໜີມອບສິດໃຫ້ ຜູ້ອຳນວຍການໃຫຍ່ ຄົນເກົ່າຮັບຜິດຊອບໜ້າທີ່ແທນໄປກ່ອນ;

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງການໃຫ້ສິດແກ່ສະພາບໍລິຫານໃນການຊອກຫາ ແລະ ຄັດເລືອກເອົາບຸກຄົນທີ່ມີຄວາມຮູ້ຄວາມສາມາດບໍ່ວ່າຈະມາຈາກພາຍໃນ ຫຼື ຕ່າງປະເທດ ມາຮັບຕຳແໜ່ງ ຜູ້ອຳນວຍການໃຫຍ່ ຂອງບໍລິສັດທີ່ຫວ່າງລົງ.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 10: ສະເໜີ ແລະ ຮັບຮອງ ການປັບປຸງໂຄງສ້າງໃໝ່ຂອງບໍລິສັດ, ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍຂອງລັດ</u>

ລາຍລະອຽດ:

- ອີງຕາມດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວທຸລະກິດນ້ຳມັນເຊື້ອໄຟ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 127/ອຄ, ລົງວັນທີ 25 ກໍລະກົດ 2016;
- ອີງຕາມແຈ້ງການຂອງກະຊວງການຄ້າ ກ່ຽວກັບການຈັດຕັ້ງປະຕິບັດດຳລັດຂອງ ນາຍົກລັດຖະມົນຕີ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 0529/ຫອຄ.ກຄພນ ລົງວັນທີ 09/03/2018;
- ອີງຕາມກອງປະຊຸມຫາລືຮ່ວມ 3 ຝ່າຍຂອງ ສຳນັກງານ ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບລາວ, ຕະຫຼາດຫຼັກຊັບລາວ ແລະ ຜູ້ບໍລິຫານ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ຄັ້ງວັນທີ 26 ມີນາ 2018. ໂດຍການສ້າງຕັ້ງບໍລິສັດລູກດັ່ງນີ້:

1. ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ);
2. ບໍລິສັດ ຂາຍຍົກພາຍໃນ (ຊື່ຍັງບໍ່ເປັນທາງການ) ຈຳກັດ (ບໍລິສັດລູກ); ແລະ
3. ບໍລິສັດ ສະຖານີບໍລິການປ້ຳນ້ຳມັນເຊື້ອໄຟ (ຊື່ຍັງບໍ່ເປັນທາງການ) ຈຳກັດ (ບໍລິສັດລູກ)

- ຮູບການໃນການບໍລິຫານບໍລິສັດລູກທັງສາມນີ້ແມ່ນ ປທລ ຈະຖືຮຸ້ນ 100% ຖ້າມີນິຕິບຸກຄົນ ຫຼື ຄູ່ຮ່ວມທຸລະກິດທີ່ມີສັກກາຍະພາບໃນການບໍລິຫານ ແລະ ຈັດການທຸລະກິດການຄ້ານ້ຳມັນຈາກພາຍໃນ ຫຼື ຕ່າງປະເທດ ມາລົງທຶນນຳ PTL ຫຼື ການອອກຮຸ້ນເພີ່ມທຶນ, PTL ຈະຖືຮຸ້ນຢ່າງຕ່ຳ 51%.
- ປທລ ຈະໂອນຖ່າຍຊັບສິນບາງສ່ວນຂອງຕົນເອງອອກໃຫ້ທັງສາມບໍລິສັດລູກ ຕາມອັດຕາສ່ວນທີ່ເໝາະສົມຂອງແຕ່ລະບໍລິສັດລູກ ເພື່ອນຳໄປເປັນການປະກອບທຶນຮຸ້ນສ່ວນຂອງ ປທລ ໃນການຖືຄອງຮຸ້ນ ແລະ ລົງທຶນກັບບໍລິສັດລູກທັງສາມ.
- ການດຳເນີນການດ້ານຕ່າງໆ ແມ່ນໄດ້ຜ່ານຂະບວນການຢັ້ງຢືນຄວາມຖືກຕ້ອງຈາກ ບໍລິສັດທີ່ປຶກສາທາງດ້ານການເງິນ (Lanexang Securities), ບໍລິສັດທີ່ປຶກສາດ້ານກົດໝາຍ (Lao Premier) ແລະ ບໍລິສັດທີ່ປຶກສາດ້ານພາສີອາກອນ (PWC).
- ຂະບວນການໃນການດຳເນີນງານເພື່ອເຮັດໃຫ້ການປັບປຸງໂຄງສ້າງໃໝ່ນີ້ສຳເລັດແມ່ນຕ້ອງໄດ້ໃຊ້ເວລາຖ້າຫາກສຳເລັດລົງເມື່ອໃດ ປທລ ຈະແຈ້ງໃຫ້ແກ່ຜູ້ຖືຮຸ້ນທຸກທ່ານໃຫ້ຊາບຜ່ານທາງລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ຜ່ານ website ຂອງບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ການປັບປຸງໂຄງສ້າງໃໝ່ຂອງບໍລິສັດ, ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍຂອງລັດ ເປັນການສະເໜີໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍອາລະນີ້ບໍ່ມີການລົງຄະແນນສຽງ.

<u>ວາລະທີ 11: ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາແບ່ງເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.</u>

ລາຍລະອຽດ: ບໍລິສັດມີແຜນຈະປັບປຸງໂຄງສ້າງໃໝ່ ຕາມດຳລັດຂອງນາຍົກລັດຖະມົນຕີ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 0529/ຫອຄ.ກຄພນ ລົງວັນທີ 09/03/2018. ພາຍຫຼັງການປັບປຸງໂຄງສ້າງບໍລິສັດໃໝ່ສຳເລັດຈະເຮັດໃຫ້ ປທລ ຈະໄດ້ມີການໂອນຊັບສິນສ່ວນໜຶ່ງມາໃຫ້ກັບບໍລິສັດລູກເພື່ອມາດຳເນີນທຸລະກິດຄື: ບໍລິສັດ ນຳເຂົ້າ-ສົ່ງອອກ ຕ້ອງມີທຶນຈົດທະບຽນຂັ້ນຕ່ຳ 150 ຕື້ກີບ, ບໍລິສັດ ຂາຍຍ່ອຍ 50 ຕື້ກີບ, ສະຖານີບໍລິການນ້ຳມັນ 1 ຕື້ກີບຕໍ່ປ້ຳ ເຊິ່ງຈະເຮັດໃຫ້ໂຄງສ້າງໃນການບໍລິຫານຂອງບໍລິສັດລູກເປັນເອກະລາດ ຄືຈະເຮັດໃຫ້ມີການຮັບຮູ້ຊັບສິນ, ໜີ້ສິນ ແລະ ທຶນຂອງບໍລິສັດລູກ.

ດັ່ງນັ້ນ, ເມື່ອມີການປັບປຸງໂຄງສ້າງການຖືຮຸ້ນຈະເຮັດໃຫ້ບໍລິສັດລູກມີຄູ່ຮ່ວມຍຸດທະສາດເຊິ່ງຈະມີການຖືຮຸ້ນປະມານ 49% ແລະ ຄູ່ຮ່ວມຍຸດທະສາດຈະຕ້ອງເພີ່ມເງິນລົງທຶນ ໃຫ້ກັບບໍລິສັດລູກເຊິ່ງຄາດວ່າຈະມີລາຍຮັບເພີ່ມຂຶ້ນ.

ສຳລັບຫົກເດືອນຕົ້ນປີ 2018, ປທລ ຄາດວ່າຈະຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນປະມານ 17 ຕື້ກີບ (ປະມານ 2 ລ້ານໂດລາສະຫະລັດ) ພາຍຫຼັງແຍກກິດຈະການອອກມາ ແລະ ພາຍຫຼັງເອກະສານລາຍງານການເງິນປະຈຳໄຕມາດ 2 ປີ 2018 ຜ່ານການກວດສອບບັນຊີຈາກບໍລິສັດກວດສອບພາຍນອກສຳເລັດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາແບ່ງເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 12: ພິຈາລະນາ ແລະ ຮັບຮອງ ຮອງປະທານສະພາບໍລິຫານທ້າສອງທ່ານຄື ທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ສາມາດດຳເນີນກິດຈະການທີ່ຄ້າຍກັນກັບບໍລິສັດ ໄດ້.</u>

ລາຍລະອຽດ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 130 ຂໍ້ ຫ້າມບໍ່ໃຫ້ຜູ້ອຳນວຍການດຳເນີນທຸລະກິດທີ່ມີລັກສະນະແຂ່ງຂັນກັບບໍລິສັດຈຳກັດ ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ຂອງບໍລິສັດຈົດທະບຽນ ສະບັບເລກທີ 0024/ຄຄຊ, ລົງວັນທີ 16 ຕຸລາ 2016 ມາດຕາ 31, ເຊິ່ງທັງໝົດນັ້ນແມ່ນຕ້ອງ ໄດ້ຮັບການຢັ້ງຢືນ ແລະ ລົງຄະແນນເຫັນດີໂດຍຜ່ານກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເພື່ອຄວາມສະດວກໃນການບໍລິຫານ ແລະ ຈັດການພາຍໃນບໍລິສັດໃຫ້ມີຄວາມຄ່ອງຕົວ ແລະ ສ້າງຜົນດີໃຫ້ແກ່ທຸລະກິດໂດຍລວມຂອງບໍລິສັດ ດັ່ງນັ້ນຈຶ່ງເຫັນ ດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງໃຫ້ ປະທານ ແລະ ຮອງປະທານສະພາບໍລິຫານທັງສອງທ່ານຄື ທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ສາມາດດຳເນີນກິດຈະການທີ່ຄ້າຍກັນກັບບໍລິສັດໄດ້.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍ ຄະແນນສຽງຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຢ່າງໜ້ອຍ **ສອງສ່ວນສາມ (2/3)** ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍ **ແປດສິບສ່ວນຮ້ອຍ (80%)** ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

<u>ເອກະສານຄັດຕິດ 2</u>

ບົດຂັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ 053 /PTL
ນະຄອນຫຼວງວຽງຈັນ, ວັນທີ 18/5/2017

ບົດຂັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ເມື່ອວັນທີ 27 ເມສາ 2016 ເວລາ 10:00 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ , ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 32 ທ່ານ, ຖືຮຸ້ນລວມ 188,534,121 ຮຸ້ນ ຄິດເປັນ 80.23% ຂອງຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງ ບໍລິສັດ.

ພິທີກອນດຳເນີນກອງປະຊຸມໄດ້ແນະນຳຜູ້ອຳນວຍການແຕ່ລະທ່ານ ແລະ ເຈົ້າໜ້າທີ່ທ່ຽວຂ້ອງທີ່ໄດ້ເຂົ້າຮ່ວມປະຊຸມ ຄັ້ງນີ້:

	ສະມາຊິກສະພາບໍລິຫານ	ຕຳແໜ່ງ
1.	ທ່ານ ຫວ່າງ ລັດຕະນະວົງ	ປະທານສະພາບໍລິຫານ/ປະທານຄະນະກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ.
2.	ທ່ານ ນາງ ສະຫວັນທອງ ພົງສະຫວັນ	ຮອງປະທານສະພາບໍລິຫານ.
3.	ທ່ານ ຈັນທອນ ສິດທິໄຊ	ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່
4.	ທ່ານ ນາງ ດາລີ ພິນເສນາ	ສະມາຊິກສະພາບໍລິຫານ/ຮອງປະທານຄະນະກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ.
5.	ທ່ານ ໜູພັນ ມະຫາພົນ	ສະມາຊິກສະພາບໍລິຫານ/ກຳມະການກວດກາພາຍໃນ/ ສະມາຊິກອິດສະຫຼະ.
6.	ທ່ານ ນາງ ຈັນທະຄອມ ເມກສະຫວັນ	ສະມາຊິກສະພາບໍລິຫານ
7.	ທ່ານ ໄພໄຊ ຈັນທະວົງສາ	ສະມາຊິກສະພາບໍລິຫານ
8.	ທ່ານ ວຽງຄອນ ສິດທິໄຊ	ສະມາຊິກສະພາບໍລິຫານ

ສ່ວນ ທ່ານ ບຸນຖຸ້ນ ຈິດຕະວົງ ສະມາຊິກສະພາບໍລິຫານ ຕິດພາລະກິດທີ່ຕ່າງປະເທດຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມໃນ ຄັ້ງນີ້ໄດ້ ແລະ ບໍ່ໄດ້ແຕ່ງຕັ້ງຕົວແທນເພື່ອເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ໃນການປະຊຸມໃນມື້ນີ້, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ຜູ້ຖືຮຸ້ນລາຍຍ່ອຍ ເພື່ອເປັນຕົວແທນໃນການສັງເກດການໃນການປະຊຸມຄັ້ງນີ້.

ພິທີກອນໄດ້ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຄະແນນໃຫ້ທຸກທ່ານ ຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະ 1. ພິຈາລະນາ ຮັບຮອງຜົນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2016;
ວາລະ 2. ພິຈາລະນາ ຮັບຮອງແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2017;
ວາລະ 3. ພິຈາລະນາ ຮັບຮອງເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳປີ 2016;
ວາລະ 4. ພິຈາລະນາ ເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2016 ພາຍຫຼັງຫັກກຳໄລເຂົ້າຄັງສຳຮອງ ແລະ ຄັງສະສົມທີ່ກຳນົດຕາມລະບຽບການ ຕາມລາຍຊື່ຜູ້ຖືຮຸ້ນທີ່ປະກົດຕາມການປິດປຶ້ມທະບຽນ ເມື່ອ ວັນທີ 24 ມີນາ 2017;
ວາລະ 5. ພິຈາລະນາ ຮັບຮອງການໃຫ້ສິດແກ່ສະມາຊິກສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນໃນລະຫວ່າງປີ 2017 ເປັນໜຶ່ງຄັ້ງຕໍ່ປີ;
ວາລະ 6. ພິຈາລະນາ ຮັບຮອງຄັດເລືອກ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຜູ້ໃໝ່ ກໍຄື ບໍລິສັດ ພຣາຍວ໊ອເຕີ ເຮົ້າສ໌ກຸບເປີ໊ສ (ລາວ) ຈຳກັດຜູ້ດຽວ (PwC) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2017; ແລະ
ວາລະ 7. ພິຈາລະນາ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບ ອິດສະຫຼະຊຸດປະຈຸບັນຕື່ມອີກ 01 (ໜຶ່ງ) ສະໄໝ.

ວິທີການລົງຄະແນນ:

- ໃຊ້ການລົງຄະແນນໃນບັດລົງຄະແນນທີ່ທ່ານໄດ້ຮັບຕອນລົງທະບຽນ ໂດຍວາລະທີ 1-7 ເປັນວາລະລົງມະຕິ ເຊິ່ງຜູ້ຖືຮຸ້ນສາມາດລົງຄະແນນສຽງ ຮັບຮອງ/ບໍ່ຮັບຮອງ ແລະ ຈະຕ້ອງຜ່ານການອະນຸມັດດ້ວຍຄະແນນສຽງສ່ວນຫຼາຍຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ມາປະຊຸມ ແລະ ອອກສຽງລົງຄະແນນ.
- ຫາກຜູ້ຖືຮຸ້ນມີຈຸດປະສົງຈະລົງຄະແນນ ບໍ່ຮັບຮອງ ກໍ່ໃຫ້ໝາຍເຄື່ອງໝາຍຄູນ "X" ລົງໃນຊ່ອນຫວ່າງທີ່ກຳນົດຕາມທີ່ຜູ້ຖືຮຸ້ນຕ້ອງການ ພ້ອມຂຽນຊື່ ແລະ ລາຍເຊັນລົງໃນບັດລົງຄະແນນສຽງ.

ວິທີການນັບຄະແນນ:

- ເມື່ອສິ້ນສຸດການປະຊຸມໃນແຕ່ລະວາລະແລ້ວ ປະທານຈະຂໍໃຫ້ທ່ານຜູ້ຖືຮຸ້ນລົງມະຕິຮັບຮອງ ແລະ ເພື່ອໃຫ້ເກີດຄວາມສະດວກ ແລະ ວ່ອງໄວ ຫາກບໍ່ມີຜູ້ຖືຮຸ້ນ "ບໍ່ຮັບຮອງ" ຈະຖືວ່າມີການລົງມະຕິເປັນເອກະພາບ ແຕ່ຫາກມີຜູ້ຖືຮຸ້ນທ່ານໃດ "ບໍ່ຮັບຮອງ" ເຈົ້າໜ້າທີ່ຈະຍ່າງໄປເກັບບັດລົງຄະແນນສຽງຂອງຜູ້ຖືຮຸ້ນສະເພາະຂອງທ່ານ ໂດຍຂໍໃຫ້ທ່ານຍົກມືຂຶ້ນທັງນີ້ເພື່ອເກັບເປັນເອກະສານປະກອບການລົງຄະແນນສຽງ ຂອງທີ່ປະຊຸມຜູ້ຖືຮຸ້ນຕໍ່ໄປ ຈາກນັ້ນເຈົ້າໜ້າທີ່ຈະຄິດໄລ່ຄະແນນ ແລະ ແຈ້ງຜົນການລົງຄະແນນໃຫ້ທີ່ປະຊຸມຮັບຊາບໃນແຕ່ລະວາລະທັນທີກ່ອນທີ່ຈະເລີ່ມດຳເນີນການປະຊຸມໃນວາລະຖັດໄປ.

ຂໍ້ຄວນຮັບຊາບອື່ນໆ:

ກໍລະນີທີ່ຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີໃດໆ ໃນແຕ່ລະວາລະ ລົບກວນທ່ານ ກະລຸນາຍົກມືຂຶ້ນ ແລະ ລົບກວນທ່ານກະລຸນາແຈ້ງຊື່ ແລະ ນາມສະກຸນກ່ອນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ຕໍ່ໄປ ທັງນີ້ເພື່ອໃຫ້ເກີດຄວາມໂປ່ງໃສໃນການນັບຄະແນນສຽງການ

ປະຊຸມໃນມື້ນີ້ ຂ້າພະເຈົ້າຂໍລົບກຽດອາສາສະໝັກຜູ້ຖືຄຸ້ນ ຫຼື ຜູ້ຮັບມອບສິດຈາກຜູ້ຖືຄຸ້ນຢ່າງໜ້ອຍ 2 ທ່ານ ມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ໂດຍລົບກຽດທ່ານແຈ້ງຊື່ ແລະ ນາມສະກຸນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຄຸ້ນ ຫຼື ຜູ້ຮັບມອບສິດ ຈາກຜູ້ຖືຄຸ້ນທ່ານໃດ ແລະ ຂໍຮຽນເຊີນທ່ານທີ່ບໍ່ມີເວນດ້ານໜ້າຂອງຈຸດນັບຄະແນນເລີຍຂໍຮຽນເຊີນ. ໃນກອງປະຊຸມມີຜູ້ຖືຄຸ້ນ 1 ຄົນ ຄືທ່ານ ນາງ ພູມວິໄລ ສີລິພົນເດດ, ເຊິ່ງເປັນຜູ້ຖືຄຸ້ນມາຮ່ວມກອງປະຊຸມດ້ວຍຕົນເອງ ໄດ້ສະໝັກມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ແລະ ຫຼັງຈາກນັ້ນບໍ່ມີອາສາສະໝັກທ່ານອື່ນ ພິທີກອນຈຶ່ງໄດ້ແຈ້ງວ່າ ມີອາສາສະມັກ 1 ທ່ານຮ່ວມກັບຄະນະກຳມະການບໍລິສັດ ແລະ ມອບໝາຍໃຫ້ຝ່າຍເລຂານຸການຂອງ ບໍລິສັດດຳເນີນການຮ່ວມນັບຄະແນນໃນແຕ່ລະວາລະ.

ຫຼັງຈາກນັ້ນ ທ່ານ ຫວ່າງ ຣັຕຕະນະວົງ ປະທານສະພາບໍລິຫານ, ປະທານຄະນະກຳມະການກວດກາພາຍໃນ/ສະມາຊິກອິດສະຫຼະ ເປັນຜູ້ກ່າວເປີດປະຊຸມ ແລະ ໄດ້ມອບໃຫ້ທ່ານ ຈັນທອນ ສິດທິໄຊ ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການປະຊຸມໃນແຕ່ລະວາລະແທນ ໂດຍອີງຕາມວາລະຂອງກອງປະຊຸມສາມັນຜູ້ຖືຄຸ້ນ ປ2ທ ປະຈຳປີ 2016 ດັ່ງມີລາຍລະອຽດດັ່ງນີ້:

ວາລະທີ 1. ພິຈາລະນາ ຮັບຮອງຜົນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2016.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບການຜົນການດຳເນີນທຸລະກິດໃນສົກປີ 2016 ເຊິ່ງມີລາຍລະອຽດດັ່ງນີ້:

1. **ສະຫຼຸບດ້ານການຂາຍ:** ຍອດຂາຍໂດຍລວມຂອງໝົດປີທັງພາຍໃນ ແລະ ຕ່າງປະເທດເທົ່າກັບ 161,371,005 ລິດ ທຽບໃສ່ຍອດຂາຍປີ 2015 ເທົ່າກັບ 140,591,500 ລິດ. ເພີ່ມຂຶ້ນ 20,779,505 ລິດ (ລວມທັງຍີ່ຫໍ້ເວັ້ນ ແລະ ບໍ່ຍີ່ຫໍ້ເວັ້ນພາສີ),
   - ການຂະຫຍາຍປ້ຳໃນຂອບເຂດທົ່ວປະເທດສາມາດປະຕິບັດໄດ້ 21 ສະຖານີບໍລິການ ປະຕິບັດໄດ້ເທົ່າກັບ 55% ຂອງແຜນໃນ 38 ປ້ຳ, ເຖິງວ່າການຂະຫຍາຍຕົວຂອງ ສະຖານີບໍລິການບໍ່ສາມາດບັນລຸຕາມຄາດ ໝາຍກໍ່ຕາມ, ແຕ່ກໍ່ຍັງສາມາດຮັກສາທ່າຂະຫຍາຍຕົວເພີ່ມຂຶ້ນຕາມຈັງຫວະການຂະຫຍາຍຕົວຂອງ ເສດຖະກິດມະຫາພາກ ກໍ່ຄືການເພີ່ມຂຶ້ນຂອງບັນດາປ້ຳແຕ່ລະຊຸະນິດ.
   - ຍອດການຂະຫຍາຍຕົວຂອງ ລູກຄ້າໂຄງການໃນຂອບເຂດທົ່ວປະເທດສາມາດປະຕິບັດໄດ້ 13 ໂຄງການໃນນັ້ນ ມີລູກຄ້າໂຄງການກໍ່ສ້າງ 8 ໂຄງການ ແລະ ອຸດສາຫະກຳ-ຂົນສົ່ງ 5 ໂຄງການ.

2. **ສະຫຼຸບວຽກງານດ້ານການຕະຫຼາດ:** ໃນປີ 2016 ບໍລິສັດໄດ້ຈັດໂຄງການ ລ2ຍລາຍວັນຂຶ້ນເຊິ່ງເປັນໂຄງການທີ່ຄືນກຳໄລໃຫ້ແກ່ລູກຄ້າຕະຫຼ2ດປີ ໂດຍມີລາງວັນລວມມູນຄ່າຫຼາຍກວ່າ 3ຕື້ ກີບ. ນອກນີ້, ກິດຈະກຳສົ່ງເສີມການຂາຍໃຫ້ແກ່ປ້ຳນ້ຳມັນເປີດໃໝ່ແມ່ນ ໄດ້ຮັບຜົນດີ ເປັນການກະຕຸ້ນຍອດຂາຍ ແລະ ເປັນທີ່ຜູ້ຮັບຮູ້ທາງດ້ານພາບລັກ ແລະ ການສື່ສານຈາກທາງບໍລິສັດ ລວມເຖິງການພັດທະນາດ້ານຍອດຂາຍຂອງ ປ້ຳນ້ຳມັນ ພລັສ (PLUS) ໃນທົ່ວປະເທດໄປພ້ອມກັນ.

   - ບໍລິສັດ ຍັງມີໂຄງການການຊ່ວຍເຫລືອສັງຄົມ ຕາມນະໂຍບາຍຂອງພວກເຮົາ ໂດຍແມ່ນ ຝ່າຍການຕະຫຼາດໄດ້ ເປັນແກນນຳໃນປະຕິບັດງານໂຄງການຫຼັກໆເຊັ່ນ: ໂຄງການ ປັນນ້ຳໃຈຊ່ວຍເຫຼືອຜູ້ປະສົບໄພໜາວ ແລະ ໂຄງການຄືນ ສິຂຽວໃຫ້ແກ່ທຳມະຊາດ, ຊຶ່ງເປັນປີທີ 5 ທີ່ທາງບໍລິສັດ ໄດ້ປະຕິບັດມາຢ່າງຕໍ່ເນື່ອງ. ໃນກິດຈະກຳປີນີ້ລວມເປັນມູນຄ່າ 689,449,000 ກີບ ເພື່ອເປັນການແບ່ງປັນ ແລະ ມີນ້ຳໃຈຊ່ວຍເຫຼືອເຊິ່ງກັນ ແລະ ກັນຢ່າງຕັ້ງໜ້າ.

3. **ສະຫຼຸບວຽກງານດ້ານສາງນ້ຳມັນ:** ອີງຕາມການສັງລວມການຮັບ-ຈ່າຍໃນສົກປີ 2016 ຂອງສາງທັ້ງ 5 ແຫ່ງຂອງບໍລິສັດ ປິໂຕຣເທຣດ ມີລາຍລະອຽດຊຸ່ມນີ້:
   - ຮັບເຂົ້າສາງທັ້ງໝົດ 106,107,697 ລິດ ທຽບໃສ່ປີ 2015 ເພີ່ມຂຶ້ນ 3,16%

- ຈ່າຍອອກລວງຫັ້ງຫມົດ 106,532,069 ລິດ ທຽບໃສ່ປີ 2015 ເພີ່ມຂຶ້ນ 4,90%
- ຄ່າສະເລ່ຍການລະເຫີຍອາຍນ້ຳມັນແອັດຊັ່ງ 95 ເທົ່າກັບ -3,966 ລິດ ຂອງຍອດຮັບຫັ້ງຫມົດ 960,194 ລິດ
- ຄ່າສະເລ່ຍການລະເຫີຍອາຍນ້ຳມັນແອັດຊັ່ງ 91 ເທົ່າກັບ -96,022 ລິດ ຂອງຍອດຮັບຫັ້ງຫມົດ 27,908,579 ລິດ
- ຄ່າສະເລ່ຍການລະເຫີຍອາຍນ້ຳມັນການຊອນ ເທົ່າກັບ -181,649 ລິດ ຂອງຍອດຮັບຫັ້ງຫມົດ 77,238,924 ລິດ

4. **ສະຫຼຸບວຽກງານດ້ານບຸກຄະລາກອນ:** ຈຳນວນພະນັກງານຫັ້ງໝົດຮອດວັນທີ 30 ພະຈິກ 2016 ຈຳນວນ 191 ຄົນ ເພີ່ມຂຶ້ນຈາກປີ 2015 ຈຳນວນ 32 ຄົນ;
   - ໄດ້ຮັບການເລື່ອນຕຳແໜ່ງ 30 ຄົນ, ມອບລາງວັນພະນັກງານດີເດັ່ນ ແລະ ລາງວັນໄປທ່ອງທ່ຽວຕ່າງປະເທດ ຈຳນວນ 5 ທ່ານ.
   - ຈ່າຍຄ່າປະກັນສຸຂະພາບ (ປະກັນສັງຄົມ) ໃນສ່ວນພະນັກງານທີ່ຈ່າຍ 451,482,920 ກີບ/ປີ
   - ຈ່າຍຄ່າທຳນຽມ ກວດສຸຂະພາບປະຈຳປີ ແກ່ພະນັກງານຫັ້ງໝົດ ຈຳນວນ 87,486,000 ກີບ/ປີ
   - ຄ່າອຸດໜູນພະນັກງານສ້າງຄອບຄົວໃໝ່, ພະນັກງານເກີດລູກໃໝ່, ກິນທານໃຫ້ແກ່ຜູ້ເສຍຊີວິດ, ຈັດງານສັງສັນ ແລະ ກິດຈະກຳຫີລາ ແລະ ຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມ ລວມເປັນຈຳນວນ 32,400,000 ກີບ
   - ມອບລາງວັນເຂັ້ມຂັດຕຳໜັກ 1 ບາດ ໃຫ້ແກ່ພະນັກງານທີ່ເຮັດວຽກຄົບ 5ປີ.

5. **ສະຫຼຸບວຽກງານດ້ານຍຸດທະສາດອົງກອນ:** ເພື່ອຮອງຮັບຕໍ່ການຂະຫຍາຍຕົວຂອງທຸລະກິດໃຫ້ມີສະຖຽນລະພາບ ແລະ ທຽບເທົ່າກັບມາດຕະຖານສາກົນ. ດັ່ງນັ້ນ, ບໍລິສັດ ຈຶ່ງໄດ້ວາງຍຸດທະສາດເພື່ອເປັນເປົ້າໝາຍໃນການຄື:

   1) ປັບປຸງໂຄງສ້າງການບໍລິຫານສາຍງານໃນອົງກອນ.
   2) ນຳໃຊ້ເຕັກໂນໂລຢີ ເຂົ້າໃນການດຳເນີນທຸລະກິດ.

6. **ວຽກງານດ້ານວິສາວະກຳ:** ໃນປີ2016 ຝ່າຍວິສະວະກຳ ແລະ ສ້ອມແປງ ໄດ້ມີການສຳຫຼວດ-ອອກແບບປ້ຳ ໂດຍຜ່ານການຕິດຕາມໂຄງການກໍ່ສ້າງ ແລະ ແນະນຳໂຄງການຕ່າງໆ ເຊິ່ງສາມາດສະຫລຸບໄດ້ ມີຈຳນວນປ້ຳທີ່ເກີດຂຶ້ນໃໝ່ ແລະ ໄດ້ມີການປັບປຸງປ້ຳຄືນໃໝ່ ຕາມດັ່ງລາຍລະອຽດດັ່ງນີ້:

   - ຕິດຕາມ, ອອກແບບ ແລະ ກໍ່ສ້າງປ້ຳນ້ຳມັນ ໂກລ (Gold) 3 ສະຖານີ, ປ້ຳນ້ຳມັນ ມາດຕະຖານ (Standard) 2 ສະຖານີ ແລະ ປ້ຳນ້ຳມັນ ຫ້ອງຖິ່ນພັດທະນາ 8 ສະຖານີ;
   - ຕິດຕາມ, ອອກແບບ ແລະ ຕົບແຕ່ງປ້ຳຄືນຫັ້ງໝົດ 25 ສະຖານີ.

7. **ສະຫຼຸບວຽກງານດ້ານບັນຊີ-ການເງິນ.**
   ສະຫຼຸບການມອບພັນທະອາກອນໃນສີກປີ 2016.

ລາຍການຊຳລະ	ຈຳນວນ
ພາສີນຳເຂົ້າ	28,23,077,500.00
ອາກອນຊົມໃຊ້	72,685,246,600.00
ອາກອນມູນຄ່າເພີ່ມ	45,679,857,508.98
ຄ່າທຸລະນະທາງ	69,191,400,000.00

ຄ້ຳແຮ	45,305,087,591.00
ອາກອນກຳໄລ	800,000,000.00
ອິມົດເຕ	1,507,770,000.00
ຄຸນນະພາບ	1,159,008,000.00
ອ.ມ.ພ.ຈ່າຍເພີ່ມໃນປີ	8,543,474,566.47
ອາກອນເງິນເດືອນ	1,064,539,532.00
ຍອດລວມທັງໝົດ:	274,149,461,298.45

ຫຼັງຈາກທ່ານ ຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ແລ້ວ ກໍ່ໄດ້ເປີດໂອກາດຮຽນເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ໃຫ້ສອບຖາມໄດ້.

ຜູ້ຖືຮຸ້ນ ຊື່ ທ່ານ ນາງ ພຸມວິໄລ ສີລິພົນເດດ, ທ່ານ ສົມແພງ ເພັງດາລຸນ ແລະ ທ່ານອ່ອນຈັນ ຈັນທອງສີ ເປັນຜູ້ຖືຮຸ້ນທີ່ມາຮ່ວມກອງປະຊຸມດ້ວຍຕົນເອງ ໄດ້ມີຄຳເຫັນ ແລະ ຄຳຖາມດັ່ງນີ້:

<u>ຄຳເຫັນ ແລະ ຄຳຖາມ:</u>

1. ທາງບໍລິສັດ ປທລ ມີມາດຕະຖານໃນການພິຈາລະນາ ຄັດເອົາຮ້ານ ຫຼື ຜູ້ທີ່ຕ້ອງການເຊົ່າພື້ນທີ່ໃນປ້ຳນ້ຳມັນ PLUS?
2. ໃຫ້ບໍລິສັດກວດສອບບັນຊີ ຊີ້ແຈງໃຫ້ບັນດາຜູ້ຖືຮຸ້ນເຂົ້າໃຈກ່ຽວກັບຮຸ້ນສິນຂອງບໍລິສັດ
3. ຕາມແຜນການຂະຫຍາຍປ້ຳໃນປີ 2017 ບໍລິສັດໝັ້ນໃຈໄດ້ບໍ່ວ່າ ບັງຈະຮັກສາຍອດຂາຍໄດ້ຕາມເປົ້າຫຼືບໍ່?
4. ຖ້າບໍລິສັດມີການເພີ່ມຍອດຂາຍຂຶ້ນໃນປີ 2017 ບໍລິສັດຍັງຄົງຂາດທຶນຄືໃນສີກປີ 2016 ນີ້ບໍ?

ທ່ານຜູ້ອຳນວຍການໃຫຍ່ໄດ້ຕອບຄຳຖາມຕໍ່ທີ່ປະຊຸມດັ່ງນີ້:

<u>ຄຳຕອບ:</u>

1. ບໍລິສັດໄດ້ວາງມາດຕະການໃນການພິຈາລະນາຮ້ານ ຫຼື ຜູ້ທີ່ຕ້ອງການເຊົ່າພື້ນທີ່ໃນການໃຫ້ບໍລິການໃນປ້ຳນ້ຳມັນເຊັ່ນ: ສອບຖາມຄວາມເປັນມາ, ປະເພດກິດຈະການທີ່ແທດເໝາະ, ວິຄຣາດຂອງອາຫານ, ຄວາມນິຍົມ, ການຕົກແຕ່ງໃນຮ້ານ. ນອກຈາກນີ້ບໍລະສັດຍັງມີຄວາມຍິນດີ ໃຫ້ຄຳແນະນຳແກ່ຜູ້ເຊົ່າໃນການບໍລິຫານຈັດການ ແລະ ພ້ອມທັງສົ່ງເສີມທຸລະກິດຂອງຄົນລາວໃຫ້ເຕີບໃຫຍ່ຂະຫຍາຍຕົວໄປ ພ້ອມໆກັນ.
2. ບັນດາຜູ້ຖືຮຸ້ນສາມາດອ່ານ ແລະ ສຶກສາໄດ້ ໃນບົດລາຍງານການເງິນຂອງບໍລິສັດ ທີ່ຜ່ານການກວດສອບຈາກບໍລິສັດຜູ້ກວດສອບພາຍນອກ ໄດ້ລາຍງານຕາມເນື້ອໃນຂອງບົດສະຫຼຸບຮຸ້ນສິນບັດ.
3. ຂ້າພະເຈົ້າໃນນາມ ຜູ້ບໍລິຫານ ເຊື່ອໝັ້ນວ່າ ບໍລິສັດຍັງຄົງຮັກສາຍອດຂາຍໄດ້ຕາມເປົ້າໝາຍໄດ້ ຫຼື ອາດຈະສູງກວ່າແຜນທີ່ວາງໄວ້ ຖ້າຫາກວ່າພາກລັດຖະບານມີການປັບໂຄງສ້າງລາຄາຕາມທີ່ບໍລິສັດໄດ້ໃຫ້ຄຳແນະນຳຈາກຜູ້ຊ່ຽວຊານດ້ານລາຄານ້ຳມັນຕະຫຼາດພຸມມິພາກອາຊີ-ປາຊີຟິກ (Platts) ຈາກປະເທດສິງກະໂປ ກ່ຽວກັບໂຄງສ້າງການຕັ້ງລາຄານ້ຳມັນໃນແຕ່ລະໄລຍະ ຕາມການເຄື່ອນໄຫວຂອງລາຄານ້ຳມັນໂລກ.

4. ການຂາດທຶນຂອງບໍລິສັດໃນປີ 2016 ປັດໄຈຫຼັກກໍ່ບໍ່ແມ່ນຈາກຍອດຂາຍ ຫຼຸດລົງ ຫຼື ເພີ່ມຂຶ້ນແຕ່ພຽງຢ່າງດຽວ, ຊຶ່ງບໍລິສັດກໍ່ຍັງຄົງຮັກສາຍອດຂາຍຈາກໜ້າປ້ຳ ແລະ ໂຄງການໄດ້ເປັນຢ່າງດີ. ສາເຫດໃນການຂາດທຶນຫຼັກໆກໍ່ແມ່ນລາຍຈ່າຍເພີ່ມຂຶ້ນຈາກການຊ້ຳ ແລະ ບໍລິຫານສາຍຢ່າງປະເຫດອີກດ້ວຍ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງ ເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2016 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,523,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,523,121 ສຽງ ຄິດເປັນ 100 %

ວາລະທີ 2. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ໃນສົກປີ 2017 ເຊິ່ງມີລາຍລະອຽດດັ່ງນີ້:

ແຜນການຂະຫຍາຍຖານລູ່ຄ້າປ້ຳຂອງປີ 2017.

ລ/ດ	ປະເພດຂະຖານີບໍລິການ	ແຜນຂະຫຍາຍ
1	ພລາຕິນຳ (PLT)	2
2	ໂກລ (GLD)	4
3	ມາດຕະຖານ (STD)	9
4	ທ້ອງຖິ່ນພັດທະນາ (THN)	10
	ຍອດລວມ:	**25**

ແຜນການຂະຫຍາຍຖານລູກຄ້າໂຄງການຂອງ ປີ 2017.

ລ/ດ	ປະເພດລູ່ຄ້າ	ແຜນຂະຫຍາຍ
1	ໂຄງການ-ກໍ່ສ້າງ (PRO-CON)	10
2	ອຸດສາຫະກຳ-ການຄ້າ (IND-TRA)	2
	ຍອດລວມ:	**12**

ແຜນການຂາຍປະຈຳປີຂອງປີ 2017.

	ຊ່ານຊ່ອງທາງການຂາຍ	ຈຳນວນ (ລ້ານ) ລິດ
ສະຖານີບໍລິການ (ປ້ຳ)	ພລາຕິນຳ (PLT)	20.15
	ໂກລ (GLD)	24.91
	ມາດຕະຖານ (STD)	20.72
	ທ້ອງຖິ່ນພັດທະນາ (THN)	17.92
ຊ່ານໂຄງການ	ໂຄງການ-ກໍ່ສ້າງ (PRO-CON)	35.57
	ອຸດສາຫະກຳ-ການຄ້າ (IND-TRA)	43.79
	ອື່ນໆ (OTH)	138
	ລວມ:	301.06

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດ ຄຳເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງປີ 2017. ໃນວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງ ເອົາແຜນການດຳເນີນທຸລະກິດຂອງປີ 2017 ດ້ວຍຄະແນນ ສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

ວາລະທີ 3. ພິຈາລະນາ ຮັບຮອງ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບ ພາຍນອກປະຈຳປີ 2016.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ກ່ຽວກັບເອກະສານລາຍງານການເງິນຂອງ ບໍລິສັດປະຈຳປີ 2016 ເປັນປີທີ່ ບໍລິສັດປະສົບບັນຫາ ຄ່າໃຊ້ຈ່າຍເພີ່ມຂຶ້ນ ໂດຍຫຼັກແມ່ນການເຊົ່າສາງນ້ຳມັນໃນຕ່າງປະເທດ ພ້ອມທັງປະສົບຂໍ້ຫຍຸ້ງຍາກຫຼາຍຢ່າງ ຊຶ່ງເປັນສາເຫດໃຫ້ບໍລິສັດບໍ່ສາມາດສ້າງຜົນກຳໄລ (ຂາດທຶນ) ໃນການດຳເນີນທຸລະກິດໃນປີນີ.

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາເອກະສານລາຍງານການເງິນຂອງບໍລິສັດທີ່ຜ່ານການກວດສອບປະຈຳປີ 2016. ໃນວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງ ເອົາເອກະສານລາຍງານການເງິນຂອງ ບໍລິສັດປະຈຳປີ 2016 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

ວາລະທີ 4. ພິຈາລະນາ ແລະ ຮັບຮອງ ເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2016 ພາຍຫຼັງຫັກກຳໄລເຂົ້າຄັງສຳຮອງ ແລະ ຄັງສະສົມທີ່ກຳນົດຕາມລະບຽບການ ຕາມລາຍຊື່ຜູ້ຖືຮຸ້ນທີ່ປະກົດຕາມການປິດປຶ້ມທະບຽນ ເມື່ອວັນທີ 24 ມີນາ 2017.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ກ່ຽວກັບເງິນປັນຜົນຈາກການດຳເນີນທຸລະກິດຂອງ ບໍລິສັດໃນສົກປີ 2016. ເຊິ່ງບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດຂອງບໍລິສັດ. ພາຍຫຼັງຫັກຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງຕາມລະບຽບການ ຕາມລາຍຊື່ຜູ້ຖືຮຸ້ນທີ່ປາກົດຢູ່ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເມື່ອວັນທີ 24 ມີນາ 2016 ໂດຍບໍ່ມີການຈ່າຍເງິນປັນຜົນໃນປີນີ້. ເນື່ອງຈາກ ບໍລິສັດບໍ່ມີກຳໄລ (ຂາດທຶນ) ໃນການດຳເນີນທຸລະກິດ.

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມໃນວາລະນີ້ ແລະ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ບໍ່ອະນຸມັດຈ່າຍເງິນປັນຜົນໃນສົກປີ 2016. ໃນວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງ ບໍລິສັດບໍ່ໄດ້ຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດ ປະຈຳປີ 2016, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານໃນການພິຈາລະນາຈ່າຍເງິນປັນຜົນ ລະຫວ່າງປີ 2017 ເປັນໜຶ່ງຄັ້ງຕໍ່ປີ.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບການ ພິຈາລະນາຈ່າຍເງິນປັນຜົນລະຫວ່າງປີ 2017 ເປັນໜຶ່ງຄັ້ງຕໍ່ປີ ເຊິ່ງມີລາຍລະອຽດດັ່ງນີ້:

ໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນໃນລະຫວ່າງປີ 2017 ເປັນໜຶ່ງຄັ້ງຕໍ່ປີ ໂດຍມອບໃຫ້ສະພາ ບໍລິຫານຈະພິຈາລະນາ ແລະ ຈັດຕັ້ງປະຕິບັດການຈ່າຍເງິນປັນຜົນ, ກຳນົດຈຳນວນເງິນປັນຜົນ ແລະ ວັນທີຈ່າຍເງິນປັນຜົນ.

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດ ຄຳເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມໃນວາລະນີ້ ແລະ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການໃຫ້ສິດແກ່ສະພາບໍລິຫານໃນການພິຈາລະນາຈ່າຍເງິນປັນຜົນລະຫວ່າງປີ 2017. ໃນວາລະນີ້ກອງປະຊຸມຈະຕ້ອງ ລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາການໃຫ້ສິດແກ່ສະພາບໍລິຫານໃນການພິຈາລະນາຈ່າຍ ເງິນປັນຜົນລະຫວ່າງປີ 2017 ເປັນໜຶ່ງຄັ້ງຕໍ່ປີ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

ວາລະທີ 6. ຮັບຮອງ ການແຕ່ງຕັ້ງເລືອກຜູ້ກວດສອບບັນຊີພາຍນອກຜູ້ໃຫມ່ກໍ່ຄື ບໍລິສັດ ພຣາຍວໍເຕີເຮົ້າສ໌ກຸ້ປ ເປີ ສ໌ (ລາວ) ຈຳກັດຜູ້ດຽວ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກປະຈຳປີ 2017.

ທ່ານຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບການຄັດເລືອກຜູ້ກວດສອບບັນຊີພາຍນອກປະຈຳ ປີ 2017 ເຊິ່ງມີ ລາຍລະອຽດດັ່ງນີ້:

ອີງຕາມຂອງລະບຽບການ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ກ່ຽວກັບອານຸການໃຫ້ບໍລິການຂອງວິ ສາຫະກິດບັນຊີ ແລະ ວິສາຫະກິດກວດສອບ, ບໍລິສັດໄດ້ສະເໜີຜູ້ກວດສອບບັນຊີພາຍນອກຜູ້ໃຫມ່ ແມ່ນ ພຣາຍວໍເຕີເຮົ້າສ໌ກຸ້ປ ເປີ ສ໌ (ລາວ) ຈຳກັດຜູ້ດຽວ ຫຼື (PwC) ເປັນຜູ້ກວດສອບບັນຊີສຳລັບປີບັນຊີ 2017 ພ້ອມກຳນົດຄ່າຈ້າງລະຫວ່າງ 55,000-57,000 ໂດລາສະຫະລັດ ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ເພື່ອພິຈາລະນາຮັບຮອງ.

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳ ເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມໃນວາລະນີ້ ແລະ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຜູ້ໃຫມ່ ພ້ອມທັງກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ. ໃນວາລະນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຜູ້ໃໝ່ ພ້ອມ ກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກຂອງ ສົກປີ 2017 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

ວາລະທີ 7: ພິຈາລະນາ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບ ອິດສະຫຼະຊຸດປະຈຸບັນຕື່ມອີກ 01 (ໜຶ່ງ) ສະໄໝ.

ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບການຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກ ຄະນະກວດສອບອິດສະຫຼະຊຸດປະຈຸບັນຕື່ມອີກ 01 (ໜຶ່ງ) ສະໄໝ.

ອີງຕາມຂໍ້ຕົກລົງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ, ເນື່ອງຈາກສະມາຊິກສະພາບໍລິຫານຊຸດປະຈຸບັນກຳລັງຄົບອາຍຸການສອງປີໃນການເປັນສະມາຊິກສະພາບໍລິຫານ. ດັ່ງນັ້ນ, ບໍລິສັດ ຕ້ອງການຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານຕື່ມອີກໜຶ່ງສະໄໝ ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ເພື່ອພິຈາລະນາຮັບຮອງ.

ຫຼັງຈາກ ທ່ານຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມໃນວາລະນີ້ ແລະ ທ່ານຜູ້ອຳນວຍການໃຫຍ່ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານຕື່ມອີກໜຶ່ງສະໄໝ. ໃນວາລະນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາຕ້ອງການຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານຊຸດ ປະຈຸບັນຕື່ມອີກໜຶ່ງສະໄໝ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 188,534,121 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 188,534,121 ສຽງ ຄິດເປັນ 100 %

